# ພົດຈະນານຸກົມການເງິນຈຸລະພາກ
# Microfinance Dictionary







## English-Lao
## ອັງກິດ-ລາວ

gtz

COOPERATION LAO PDR
FEDERAL REPUBLIC OF GERMANY

Bank of the Lao PDR

# ພົດຈະນານຸກົມການເງິນຈຸລະພາກ
# Microfinance Dictionary
## ອັງກິດ-ລາວ
## English-Lao

// Acknowledgements

This present dictionary was inspired by a prior publication with the title "Microfinance Terminology in Lao" published by NERI (National Economic Research Institute) and Concern Worldwide in 2005. In late 2009 we began the process of reviewing, updating and expanding this original version with the result of creating a new and significantly increased document, which by then had grown to about twice its original size.

This intermediate dictionary was then peer-reviewed and approved by a specifically appointed dictionary committee which comprised members of the National University of Laos, the Bank of Laos, the Microfinance Working Group, and a private Microfinance Institution in Vientiane. We can proudly say that the final product of this lengthy process is a new publication in its own right. However we acknowledge all the various people and institutions that have contributed to making this publication possible. In particular we would like to extend our gracious thanks to:

- NERI and Concern Worldwide for inspiring us to undertake this work and for laying the groundwork for this publication.

- Mr. Keolabthavong Songsamayvong and Ms. Vanhsy Chindavong for updating the existing work and for contributing new vocabulary

- Prof Dr. Phosy Chanhming and Prof. Dr. Boualy Paphaphanh (National University of Laos), Ms. Keasone Manivong (Bank of Laos), Mr. Bandith Sisoukda (Microfinance Working Group/GTZ) and Mr. Somphone Sisenglath (Microfinance Center), all members of the dictionary committee, who peer reviewed and approved on the final version of this dictionary

We hope that this dictionary will be a useful reference guide that can contribute to enable microfinance practitioners in Lao PDR to take advantage of the wealth of technical knowledge available in English. By that we hope to contribute to the quality of the microfinance sector as a whole.

Vientiane, November 11 2010

**Klaus Prochaska**
**Team Leader**
**Access to Finance for the Poor (GTZ)**

**Account:** **ບັນຊີ/ໝວດບັນຊີ**

ແມ່ນຫົວໜ່ວຍພື້ນຖານສຳລັບບັນຈຸຂໍ້ມູນໃນລະບົບບັນຊີ;1 ປະກອບດ້ວຍໝວດບັນຊີປະເພດຕ່າງໆ ເຊັ່ນ: ຊັບສິນ, ໜີ້ສິນ, ທຶນ, ລາຍຮັບ ແລະ ລາຍຈ່າຍ.

**Account Balance:** **ຍອດເຫຼືອບັນຊີ**

ແມ່ນຈຳນວນຜິດດ່ຽງໃນຈຳນວນເງິນທັງໝົດ ລະຫວ່າງຈຳນວນລວມ ເບື້ອງ “ໜີ້” ແລະ ຈຳນວນລວມເບື້ອງ “ມີ” ຂອງໝວດບັນຊີໃດໜຶ່ງ.

**Accountant:** **ນາຍບັນຊີ/ພະນັກງານບັນຊີ**

**Accounting:** **ການບັນຊີ**

ແມ່ນລະບົບຂໍ້ມູນທີ່ວັດແທກບັນດາຂັ້ນຕອນ ແລະ ນຳສະເໜີຂໍ້ມູນດ້ານການເງິນກ່ຽວກັບຫົວໜ່ວຍທຸລະກິດ ເພື່ອໃຫ້ຜູ້ໃຊ້ລະບົບສາມາດພິຈາລະນາ ແລະ ຕັດສິນບັນຫາໄດ້ຢ່າງມີຂໍ້ມູນຄົບຖ້ວນ.

**Accounting cycle:** **ວົງຈອນການບັນຊີ**

ແມ່ນໝົດທຸກບາດກ້າວໃນຂັ້ນຕອນການບັນຊີ ເຊິ່ງລວມມີການເຄື່ອນໄຫວການວິເຄາະ ແລະ ການບັນທຶກ, ການລົງບັນຊີ,

ການດັດແກ້/ປັບປຸງ, ການປິດບັນຊີແລະ ການກະກຽມບົດລາຍງານດ້ານການເງິນ ແລະ ລະບົບບັນຊີ.

**Accounting documents:** **ເອກະສານການບັນຊີ**ໝາຍເຖິງບັນຊີແຍກ ປະເພດທົ່ວໄປ, ບັນທຶກບັນຊີປະຈຳວັນ, ບັນທຶກ ເງິນສົດ, ການບັນທຶກທາງ ບັນຊີອື່ນໆ ແລະ ເອກະສານຕ່າງໆ ທີ່ ຈົດກ່າຍດ້ວຍມື ຫຼື ທາງອີເລັກໂຕຼນິກ ທີ່ ສະຖາບັນການເງິນນຳໃຊ້.

**Accounting system:** **ລະບົບບັນຊີ**

**Accounting Treatment:** **ການລົງບັນຊີ**

ໝາຍເຖິງການບັນທຶກການເຄື່ອນໄຫວ ບັນຊີ ລົງໃນເບື້ອງ "ໜີ້" ຫຼື "ມີ" ຕາມ ຄວາມເໝາະສົມ

**Accredited agent (AA):** **ຕົວແທນສິນເຊື່ອທາງການ**

**Accrual based accounting:** **ການບັນຊີຕາມໜີ້ສິນ**

ແມ່ນການຮັບຮູ້ລາຍຮັບ ແລະ ລາຍຈ່າຍ ໃນເວລາມີລາຍຮັບ ແລະ ລາຍຈ່າຍເກີດ ຂື້ນ ເຖິງແມ່ນວ່າເງິນສົດຍັງບໍ່ທັນໄດ້ຮັບ ຫຼື ຍັງບໍ່ ທັນໄດ້ຈ່າຍ. ຕາມຫຼັກການແຫ່ງ ການບັນຊີຄູ່, ມັນຮຽກຮ້ອງໃຫ້ລາຍ ຈ່າຍ

ຄຽງຄູ່ກັບລາຍຮັບເຊິ່ງເປັນຜົນເຮັດໃຫ້ມີການຍັ້ງຢືນ ລາຍຮັບ ຕ້ອງຮັບ, ລາຍຈ່າຍຕ້ອງຈ່າຍ, ລາຍຈ່າຍລ່ວງໜ້າ, ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງ.

**Accrued expense:** **ລາຍຈ່າຍຕ້ອງຈ່າຍ**

ແມ່ນລາຍຈ່າຍທີ່ຮັບຮູ້ແລ້ວ ແຕ່ວ່າເງິນຍັງບໍ່ທັນໄດ້ຈ່າຍໃນເວລາປິດ ບັນຊີ ເຊັ່ນ: ເງິນເດືອນ, ດອກເບ້ຍເງິນກູ້ຢືມມາ, ດອກເບ້ຍຕ້ອງຈ່າຍ ໃຫ້ແກ່ເງິນຝາກຂອງລູກຄ້າ.

**Accrued income:** **ລາຍຮັບຕ້ອງຮັບ**

ແມ່ນລາຍຮັບທີ່ຮັບຮູ້ແລ້ວ ແຕ່ວ່າເງິນຍັງບໍ່ທັນໄດ້ຮັບໃນເວລາປິດບັນຊີ. ຢູ່ໃນວຽກງານການເງິນ, ລາຍຮັບຕ້ອງຮັບຕົ້ນຕໍແມ່ນດອກເບ້ຍເງິນກູ້ ທີ່ຮອດກຳນົດເວລາທີ່ຮັບຮູ້ເປັນລາຍຮັບແລ້ວ ແຕ່ວ່າລູກຄ້າຍັງບໍ່ທັນມາ ຊຳລະເງິນ.

**Accumulated depreciation:** **ຄ່າຫຼຸ້ຍຫ້ຽນສະສົມ**

ແມ່ນບັນຊີນຳໃຊ້ເພື່ອຫຼຸດຜ່ອນມູນຄ່າຂອງບັນຊີຊັບສົມບັດ ໂດຍການສະສົມມູນຄ່າຫຼຸ້ຍຫ້ຽນທີ່ຜ່ານມາທັງໝົດຂອງຊັບສົມບັດທີ່ມີອາຍຸການນຳໃຊ້ໄລຍະໃດໜຶ່ງຕາມທີ່ໄດ້ກຳນົດໄວ້.

**Active borrower:** **ຜູ້ກູ້ຢືມປະຈຳ**

ແມ່ນລູກໜີ້ທີ່ດີ, ຊຳລະເປັນປົກກະຕິ

**Active client:** **ລູກຄ້າປົກກະຕິ**

ແມ່ນລູກຄ້າທີ່ມີການເຄື່ອນໄຫວປົກກະຕິ, ລູກຄ້າທີ່ດີ

**Actual collection interest/ principal/fee:** **ດອກເບ້ຍ/ຕົ້ນທຶນ/ຄ່າທຳນຽມ ທີ່ເກັບໄດ້ຕົວຈິງ**

ພະນັກງານສິນເຊື່ອ/ພາກສະໜາມຈະຄິດໄລ່ຈຳນວນເປົ້າໝາຍ (target) ທີ່ເຂົາເຈົ້າຈະສາມາດເກັບໄດ້ ແລະ ຄວນເກັບໄດ້ຈາກສະມາຊິກທີ່ຕົນຮັບຜິດຊອບ. ເມື່ອລົງເກັບຕົວຈິງອາດຈະບໍ່ໄດ້ຕາມຄາດໝາຍທີ່ໄດ້ວາງໄວ້, ສະນັ້ນ ຈຶ່ງເອີ້ນຈຳນວນນີ້ວ່າ ຈຳນວນເງິນເກັບໄດ້ຕົວຈິງ

(Actual collection)

**Added value:** **ມູນຄ່າເພີ່ມມູນຄ່າເພີ່ມ**

**Adjusted return on assets:** **ຜົນຕອບແທນຕໍ່ຊັບສິນບັດຫຼັງການປັບ**

ອັດຕາສ່ວນນີ້ຖືກຄິດໄລ່ບົນພື້ນຖານການປັບດັດເພື່ອແກ້ໄຂຜົນກະທົບຂອງການຖົມຊຸມ, ເງິນເຟີ້, ການຫັກຄັງແຮເພື່ອໜີ້ສູນ ແລະ ລາຍການອື່ນໆ ທີ່ບໍ່ໄດ້ລວມຢູ່ໃນລາຍໄດ້ຈາກການດຳເນີນງານສຸດທິຂອງສະຖາບັນການເງິນຈຸລະພາກ. ຜົນຕອບແທນຕໍ່ຊັບສິນບັດຫຼັງການປັບປຸງຄິດໄລ່

ດ້ວຍຜົນບວກຂອງລາຍໄດ້ຈາກການດຳ ເນີນງານສຸດທິຫຼັງການປັບປຸງ ແລະ ຈ່າຍ ອາກອນແລ້ວຫານໃຫ້ຊັບສິນບັດສະເລ່ຍ.

**Adjusted return on equity:**

**ຜົນຕອບແທນຕໍ່ທຶນຫຼັງການປັບປຸງບັນຊີ**

ອັດຕາສ່ວນນີ້ອາດຖືກຄິດໄລ່ບົນພື້ນຖານ ການປັບດັດ ເພື່ອແກ້ໄຂຜົນກະທົບຂອງ ການຖົມຊຸມ, ເງິນເຟີ້, ການຫັກຄັງແຮ ເພື່ອໜີ້ສູນ ແລະ ລາຍການອື່ນໆ ທີ່ບໍ່ໄດ້ ລວມຢູ່ໃນລາຍໄດ້ຈາກການດຳເນີນງານ ສຸດທິ ຂອງສະຖາບັນການເງິນຈຸລະພາກ. ຜົນຕອບແທນຕໍ່ທຶນທີ່ໄດ້ມີການປັບປຸງຄິດ ໄລ່ດ້ວຍຜົນບວກຂອງລາຍໄດ້ຈາກການ ດຳເນີນງານສຸດທິຫຼັງການປັບປຸງ ແລະ ຈ່າຍອາກອນ ແລ້ວຫານໃຫ້ທຶນສະເລ່ຍ.

**Adjustment to loan Loss reserves and provision expense:**

**ການປັບປຸງການຫັກຄັງແຮສຳຮອງເພື່ອໜີ້ສູນ ແລະ ລາຍຈ່າຍເງິນແຮເພື່ອໜີ້ສູນ**

ນັກວິເຄາະຈະໄດ້ປັບດັດຄັງແຮເພື່ອໜີ້ສູນ ຂອງສະຖາບັນການເງິນ ຢ່າງປົກກະຕິ ເພື່ອເຮັດໃຫ້ມັນສອດຄ່ອງກັບນະໂຍບາຍ ການບັນຊີທີ່ ເປັນມາດຕະຖານ ຫຼື ຂຶ້ນ ກັບລະດັບທີ່ມີຄວາມເໝາະສົມກັບຄວາມ ສ່ຽງ ຂອງແຕ່ລະສະຖາບັນການເງິນ. ເພື່ອປັບດັດຄັງແຮໃນໃບດຸ່ນດ່ຽງສະຫຼຸບ

ຊັບສົມບັດ. ນັກວິເຄາະຈະໄດ້ທຳການປັບປຸງ ລາຍຈ່າຍເງິນແຮເພື່ອໜີ້ສູນ ເຊິ່ງຈະໄດ້ຖືກລວມເຂົ້າກັບຄັງແຮດັ່ງກ່າວ.

**Administrative expense:** **ລາຍຈ່າຍບໍລິຫານ**
ແມ່ນຄ່າສິ້ນເປືອງທີ່ເກີດຂຶ້ນໃນການບໍລິຫານອົງກອນ ເຊັ່ນ: ຄ່າເຄື່ອງໃຊ້ຫ້ອງການ, ຄ່າປະກັນໄພ, ຄ່າທຳນຽມດ້ານກົດໝາຍ ແລະ ອື່ນໆ.

**Aging method:** **ວິທີຄິດໄລ່ຕາມອາຍຸການ** ແມ່ນວິທີການຄາດກະມູນຄ່າເງິນກູ້ທີ່ຍັງບໍ່ທັນຊຳລະບົນພື້ນຖານຂໍ້ສົມ ມຸດຖານ ກ່ຽວກັບຄວາມເປັນໄປໄດ້ໃນການເກັບຄືນເງິນກູ້ທີ່ບໍ່ທັນໄດ້ຊຳລະໃນໄລຍະສຸດທ້າຍເຊິ່ງຂຶ້ນກັບກຳນົດເວລາ ຂອງແຕ່ລະບັນຊີ

**All financial resources (the concept of funds):** **ແຫຼ່ງທຶນດ້ານການເງິນທັງໝົດ (ແນວຄວາມຄິດກ່ຽວກັບທຶນ)**
ແນວຄວາມຄິດກ່ຽວກັບທຶນທີ່ນຳໃຊ້ເຂົ້າໃນການກະກຽມບົດສະຫຼຸບກ່ຽວກັບການປ່ຽນແປງຖານະດ້ານການເງິນ ໃນຂະນະທີ່ການເຄື່ອນໄຫວກ່ຽວກັບການປ່ຽນແປງທຶນຖືກພິຈາລະນາວ່າ ເປັນໄດ້ທັງສອງຢ່າງຄື: ແຫຼ່ງທຶນ ແລະ ການນຳໃຊ້.

**Annual report:** **ບົດລາຍງານປະຈຳປີ**

ແມ່ນບົດລາຍງານທີ່ປະກອບດ້ວຍ ເອກະສານລາຍງານການເງິນ ແລະ ຂໍ້ມູນສຳຄັນອື່ນໆ ເຊິ່ງຄະນະບໍລິຫານຂອງອົງການຈັດຕັ້ງ/ແຜນງານ ໄດ້ກະກຽມໃຫ້ຜູ້ມີສ່ວນກ່ຽວຂ້ອງຂອງຕົນປີລະເທື່ອ.

**Annual Supervision Fee:** **ຄ່າຄຸ້ມຄອງປະຈຳປີ**

ແມ່ນຄ່າຄຸ້ມຄອງທີ່ສະຖາບັນການເງິນຈະຕ້ອງໄດ້ເສຍພັນທະໃຫ້ແກ່ ອົງການຄຸ້ມຄອງຄືໃນກໍລະນີ ສປປ ລາວ ກໍ່ແມ່ນທະນາຄານແຫ່ງ ສປປ ລາວ. ຄ່າຄຸ້ມຄອງດັ່ງກ່າວແມ່ນກຳນົດເປັນສ່ວນຮ້ອຍຂອງທຶນ ຈົດທະບຽນໂດຍອີງຕາມຂໍ້ກຳນົດວ່າດ້ວຍການຄຸ້ມຄອງ ສະຖາບັນການເງິນແຕ່ລະປະເພດ.

**Apex institution (Microfinance apex institution)** **ສະຖາບັນອາເປັກ (ສະຖາບັນການເງິນຈຸລະພາກອາເປັກ)**

ເປັນສະຖາບັນແບບມອບເໝົາ ທີ່ຈົດທະບຽນຖືກຕ້ອງຕາມກົດໝາຍ ເຊິ່ງໃຫ້ບໍລິການດ້ານການເງິນ, ການບໍລິຫານຄຸ້ມຄອງ ແລະ ການບໍລິ ການອື່ນໆ ແກ່ສະຖາບັນການເງິນຈຸລະພາກເປັນລາຍຍ່ອຍ.

**Appropriate retained earning:** **ລາຍໄດ້ສະສົມສຸດທິ**

ແມ່ນການກຳນົດລາຍໄດ້ສະສົມ ເຊິ່ງຊີ້ໃຫ້ເຫັນວ່າ ສ່ວນໜຶ່ງຂອງຊັບສິນບັດຂອງອົງກອນ ຈະຖືກນຳໃຊ້ເຂົ້າໃນເປົ້າໝາຍຕ່າງໆ ທີ່ບໍ່ແມ່ນການຈ່າຍເງິນປັນຜົນ.

**Arrear:** **ເງິນກູ້ຊັກຊ້າ**

ແມ່ນຈຳນວນຕົ້ນທຶນເງິນກູ້ທີ່ເຖິງກຳນົດຊຳລະຄືນ ແຕ່ສະຖາບັນຍັງບໍ່ໄດ້ຮັບ ຫຼື ເອີ້ນອີກຢ່າງໜຶ່ງວ່າໜີ້ຊັກຊ້າ (delinquency)

**Articles of incorporation** **ລະບຽບການສ້າງຕັ້ງ**

**Assets:** **ຊັບສິນ**

ແມ່ນຜົນປະໂຫຍດດ້ານເສດຖະກິດທີ່ເປັນໄປໄດ້ໃນອະນາຄົດເຊິ່ງໄດ້ມາ ຫຼື ຄວບຄຸມໂດຍຫົວໜ່ວຍທຸລະກິດໃດໜຶ່ງເຊິ່ງແມ່ນຜົນປະໂຫຍດ ທີ່ໄດ້ມາຈາກການເຄື່ອນໄຫວ ຫຼື ເຫດການໃນອະດີດ.

**Asset (running):** **ຊັບສິນໝູນວຽນ**

ແມ່ນເງິນສົດ ແລະ ພັນທະບັດທີ່ສາມາດຂາຍໄດ້, ບັນຊີໜີ້ຕ້ອງຮັບ ແລະ ສິນຄ້າໃນສາງຕາມການເຄື່ອນໄຫວປົກກະຕິຂອງທຸລະກິດທີ່ສາມາດປ່ຽນເປັນເງິນສົດໄດ້ພາຍໃນ 1 ປີ.

**Asset (fixed):** **ຊັບສິນບັດຄົງທີ່**

ໝາຍເຖິງຊັບສິນບັດທີ່ເປັນທີ່ດິນ, ອາຄານ, ເຄື່ອງຈັກ, ຍານພາຫະນະ, ອຸປະກອນ ທີ່ມີອາຍຸການນຳໃຊ້ 5 ປີຂຶ້ນໄປ ຫຼື ຕາມການກຳນົດຂອງກົດໝາຍທີ່ກ່ຽວຂ້ອງ.

**Asset (profit generated):** **ຊັບສິນບັດສ້າງກຳໄລ**

ແມ່ນຊັບສິນບັດທີ່ສ້າງລາຍໄດ້ ໂດຍຜ່ານການລົງທຶນ ຫຼື ລາຍໄດ້ທີ່ໄດ້ຮັບຈາກດອກເບ້ຍ.

**Attest function:** **ໜ້າທີ່ຢັ້ງຢືນຄວາມຖືກຕ້ອງ**

ແມ່ນການກວດກາ ແລະ ກວດສອບເອກະສານລາຍງານການເງິນ ແລະ ຢັ້ງຢືນໂດຍນັກບັນຊີອິດສະຫຼະ ຫຼື ນັກບັນຊີຮັບເໝົາ.

**Audit committee:** **ຄະນະກຳມະການກວດກາ/ກວດສອບ**

ແມ່ນຄະນະກຳມະການຂອງສະພາບໍລິຫານຂອງອົງການຈັດຕັ້ງໃດໜຶ່ງເຊິ່ງຕາມປົກກະຕິແລ້ວປະກອບດ້ວຍຄົນນອກ. ຄະນະນີ້ມີໜ້າທີ່ວ່າຈ້າງ ແລະ ຕິດຕາມການເຮັດວຽກຂອງນັກກວດສອບບັນຊີຈາກພາຍນອກ.

**Audit trial:** **ການທົດລອງກວດສອບບັນຊີ**

ແມ່ນການທົດລອງຫຼັກຖານດ້ານເອກະສານ ຢູ່ໃນລະບົບເອກະສານ ຢັ້ງຢືນດ້ານການເງິນ ໂດຍມີການອະນຸມັດເປັນລາຍລັກອັກສອນຂອງ ເຈົ້າໜ້າທີ່ ທີ່ມີສິດອຳນາດ.

**Auditing:** **ການກວດສອບບັນຊີ**

ແມ່ນການດຳເນີນການກວດກາ ແລະ ກວດສອບບັນດາເອກະສານ ລາຍງານການເງິນຂອງສະຖາບັນ ຫຼື ອົງການຈັດຕັ້ງໃດໜຶ່ງ ໂດຍ ບໍລິສັດກວດສອບບັນຊີອິດສະລະ, ເພື່ອຢັ້ງຢືນຄວາມຖືກຕ້ອງດ້ານວິຊາການຢ່າງເປັນເອກະລາດ ແລະ ສະເໜີຄວາມຄິດເຫັນໃນການແກ້ໄຂ ບັນຫາ.

**Auditor:** **ນັກກວດສອບບັນຊີ**

ແມ່ນຜູ້ກວດສອບບັນຊີອິດສະລະ ຫຼື ຜູ້ກວດສອບບັນຊີມອບເໝົາທີ່ດຳເນີນການກວດກາ ແລະ ກວດສອບການຈົດກ່າຍບັນຊີ, ເອກະສານ ລາຍງານຖານະການເງິນ ເພື່ອປະເມີນຄຸນນະພາບຂອງທຸລະກິດ.

**Auditor's report:** **ບົດລາຍງານຂອງນັກກວດສອບບັນຊີ**

**Average disbursed loan size:** **ວົງເງິນກູ້ທີ່ປ່ອຍອອກສະເລ່ຍ**

ແມ່ນການຄິດໄລ່ສະເລ່ຍວົງເງິນກູ້ ທີ່ສະຖາບັນການເງິນໄດ້ປ່ອຍອອກ ໃຫ້ລູກຄ້າ, ໂດຍການເອົາມູນຄ່າເງິນກູ້ທີ່ປ່ອຍອອກ ຫານໃຫ້ຈຳນວນ ເງິນກູ້ທີ່ປ່ອຍອອກທັງໝົດໃນຊ່ວງໄລຍະເວລາໃດໜຶ່ງ.

**Average loan size:** **ວົງເງິນກູ້ສະເລ່ຍ ນເງິນກູ້ສະເລ່ຍ)**

ໝາຍເຖິງຈຳນວນເງິນທີ່ໄດ້ມາຈາກການຄິດໄລ່ ໂດຍການເອົາຍອດເຫຼືອເງິນກູ້ຄ້າງຊຳລະຫານໃຫ້ຈຳນວນຜູ້ກູ້ທີ່ບໍ່ທັນຊຳລະ.

**Average number of loan Officers during period:** **ຈຳນວນສະເລ່ຍພະນັກງານສິນເຊື່ອຕາມໄລຍະເວລາໃດໜຶ່ງ**

ໝາຍເຖິງການສະເລ່ຍຈຳນວນ ພະນັກງານສິນເຊື່ອຕໍ່ສະຖາບັນການເງິນໃດໜຶ່ງ.

**Average Performing Assets:** **ຊັບສິນບັດທີ່ກໍ່ໃຫ້ເກີດລາຍໄດ້ສະເລ່ຍ**

ແມ່ນຊັບສິນບັດທີ່ກໍ່ໃຫ້ເກີດລາຍໄດ້ລວມເອົາເງິນສົດ, ເງິນຝາກມີດອກ ເບ້ຍ, ເງິນກູ້ທີ່ບໍ່ທັນຮອດກຳນົດຊຳລະ ແລະ ການລົງທຶນໄລຍະຍາວ. ເຊິ່ງຊັບສິນບັດເຫຼົ່ານີ້ໄດ້ມາຈາກການຄິດໄລ່ສະເລ່ຍ

ໂດຍເອົາຍອດເຫຼືອ ຊັບສິນບັດໃນຕອນຕົ້ນໄລຍະເວລາ ບວກກັບຍອດເຫຼືອໃນຕອນທ້າຍ ຂອງໄລຍະເວລາແລ້ວຫານໃຫ້ 2.

**Average Total Assets:**

**ຊັບສິນບັດທັງໝົດສະເລ່ຍ**

ແມ່ນຊັບສິນບັດທັງໝົດຂອງສະຖາບັນໄດ້ຖືກນຳໃຊ້ (ທາງກົງ ຫຼື ທາງອ້ອມ) ເຂົ້າໃນການສະໜັບສະໜູນໃຫ້ການບໍລິການດ້ານການເງິນ ຂອງຕົນ. ຊັບສິນບັດດັ່ງກ່າວ ລວມເອົາຊັບສິນບັດຄົງທີ່ຂອງສະຖາບັນ ເຊັ່ນ: ທີ່ດິນ ແລະ ອາຄານ. ຄ່າສະເລ່ຍຊັບສິນບັດທັງໝົດຄິດໄລ່ຈາກການເອົາຈຳນວນຍອດເຫຼືອໃນຕອນຕົ້ນໄລຍະເວລາບວກກັບຈຳນວນໃນ ຕອນທ້າຍໄລຍະເວລາ ແລ້ວຫານໃຫ້ 2.

**Average outstanding loan size:**

**ຂະໜາດເງິນກູ້ບໍ່ ທັນຊຳລະສະເລ່ຍ**

ແມ່ນຍອດເຫຼືອເງິນກູ້ທີ່ບໍ່ທັນຊຳລະສະເລ່ຍເຊິ່ງອາດມີຂະໜາດນ້ອຍກວ່າຂະໜາດເງິນກູ້ທີ່ປ່ອຍອອກສະເລ່ຍ. ສ່ວນຫຼາຍແມ່ນໄດ້ສົມທຽບໃສ່ກັບຜະລິດຕະພັນ ລວມພາຍໃນຕໍ່ຫົວຄົນ (ລາຍຮັບຕໍ່ຫົວຄົນ) ເພື່ອກຳນົດເບິ່ງວ່າສະຖາບັນ

ການເງິນຈຸລະພາກໄດ້ເລັງໃສ່ລູກຄ້າຜູ້ທຸກຍາກໄດ້ໜ້ອຍຫຼາຍປານໃດ. ຂະໜາດເງິນກູ້ບໍ່ທັນຊໍາລະສະເລ່ຍຄິດໄລ່ດ້ວຍການເອົາຄັງເງິນກູ້ລວມຫານໃຫ້ຈໍານວນເງິນກູ້ທີ່ບໍ່ທັນຊໍາລະ.

**Balance:** **ຄວາມດຸ່ນດ່ຽງ, ຍອດເຫລືອ**

**Balance due:** **ກໍານົດຊໍາລະ**

**Balance forward:** **ຍອດຍົກມາ**

**Balance sheet:** **ໃບສະຫຼຸບຊັບສິນບັດ**

ເອກະສານລາຍງານການເງິນ ທີ່ສະແດງໃຫ້ເຫັນຖານະການເງິນ ຂອງສະຖາບັນການເງິນ ຫຼື ອົງການຈັດຕັ້ງໃດໜຶ່ງ ໃນວັນເດືອນປີ ທີ່ໄດ້ກໍານົດໄວ້.

**Balance sheet equation:** **ສະເໝີຜົນໃບສະຫຼຸບຊັບສິນບັດ**

ແມ່ນການສະແດງອອກຂອງຖານະດ້ານການເງິນ ເຊັ່ນ: ຊັບສິນ = ໜີ້ສິນ + ທຶນ, ຫຼື ເອີ້ນອີກແບບໜຶ່ງວ່າ: ສະເໝີຜົນການບັນຊີ.

**Bankruptcy:** **ການລົ້ມລະລາຍ**

**Beneficiary:** **ຜູ້ໄດ້ຮັບຜົນປະໂຫຍດ**

**Best practice (Microfinance best practice)** **ວິທີການຈັດຕັ້ງປະຕິບັດທີ່ດີເລີດ (ວິທີການຈັດຕັ້ງປະຕິບັດທີ່ດີເລີດຂອງການເງິນຈຸລະພາກ)**

ວິທີການຈັດຕັ້ງປະຕິບັດທີ່ດີເລີດຂອງການເງິນຈຸລະພາກ ແມ່ນສະຖາບັນການເງິນຈຸລະພາກ ທີ່ມຸ່ງເນັ້ນໃຫ້ມີຄວາມໝັ້ນຄົງດ້ານ

ການເງິນ ແລະຂະຫຍາຍການບໍລິການໄປສູ່ຜູ້ທຸກຍາກ, ຜູ້ທີ່ມີລາຍໄດ້ຕໍ່າ.

| | |
|---|---|
| **Biweekly payment:** | **ການຊໍາລະເງິນສອງອາທິດຕໍ່ເທື່ອ (ເປັນລາຍສອງອາທິດ)** |
| **Borrower:** | **ຜູ້ກູ້ຢືມ** |
| **Borrower register:** | **ປື້ມທະບຽນຜູ້ກູ້ຢືມ** |
| **Bank account:** | **ບັນຊີເງິນຝາກຢູ່ທະນາຄານ** |
| **Bank reconciliation:** | **ການສົມທຽບບັນຊີທະນາຄານ** ແມ່ນຂັ້ນຕອນເພື່ອຄິດໄລ່/ເກັບກໍາຄວາມແຕກຕ່າງລະຫວ່າງຍອດ ເຫຼືອທີ່ມີຢູ່ໃນບັນຊີສໍາຮອງຂອງທະນາຄານກັບຍອດເຫຼືອເງິນສົດ ອີງຕາມປື້ມເງິນຝາກຂອງເຈົ້າຂອງບັນຊີ. |
| **Bank statement:** | **ບັນຊີສໍາຮອງຂອງທະນາຄານ** ແມ່ນໃບລາຍງານປະຈໍາເດືອນທີ່ສະແດງໃຫ້ເຫັນການເຄື່ອນໄຫວດ້ານບັນຊີພາຍໃນເດືອນ ຍອດເຫຼືອລະຫວ່າງຕົ້ນໄລຍະ ແລະທ້າຍໄລຍະ ແລະ ການເຄື່ອນໄຫວທີ່ຕິດພັນກັບ ບັນຊີຢູ່ທະນາຄານໃດໜຶ່ງ. |

**Base year:** **ປີຖານ/ປີທີ່ເກັບຂໍ້ມູນພື້ນຖານ**
ແມ່ນປີທຳອິດທີ່ຕ້ອງໄດ້ອີງໃສ່ເພື່ອ ພິຈາລະນາທຸກໆຂໍ້ມູນ.

**Book keeping:** **ການບັນທຶກບັນຊີ**
ແມ່ນການບັນທຶກການເຄື່ອນໄຫວຕ່າງໆ ແລະ ການບັນທຶກນັ້ນແມ່ນ ເປັນໄປຕາມ ຂັ້ນຕອນຂອງການບັນຊີໃດໜຶ່ງ.

**Book value:** **ມູນຄ່າໃນບັນຊີ**
ແມ່ນຊັບສິນທັງໝົດຂອງສະຖາບັນການເງິນ ຫຼື ອົງການຈັດຕັ້ງໃດໜຶ່ງ ລົບໃຫ້ໜີ້ສິນທັງ ໝົດ ແລະ ທຶນ.

**Board of Directors:** **ສະພາບໍລິຫານ, ສະພາຜູ້ອຳນວຍການ**

**Branch:** **ສາຂາ**

**Business Entity Concept:** **ຫຼັກການທຸລະກິດເອກະລາດ**
ແມ່ນຫຼັກການການບັນຊີທີ່ແຕ່ລະຫົວໜ່ວຍ ທຸລະກິດແຍກເປັນທຸລະກິດ ສະເພາະຂອງ ໃຜລາວ, ແຍກອອກຈາກຜູ້ເປັນເຈົ້າຂອງ ແລະ ແຍກ ອອກຈາກຫົວໜ່ວຍທຸລະກິດ ອື່ນ. ສະນັ້ນ ການບັນທຶກ ແລະ ບົດລາຍ ງານຂອງທຸລະກິດໃດໜຶ່ງ ບໍ່ຄວນລວມເອົາ ການເຄື່ອນໄຫວ ຫຼື ຊັບສິນ ບັດຂອງເຈົ້າ ຂອງ ຫຼື ຂອງຫົວໜ່ວຍທຸລະກິດອື່ນ.

**Business transaction:**

**ການເຄື່ອນໄຫວທຸລະກິດ**

ແມ່ນການດຳເນີນທຸລະກິດ ທີ່ກະທົບຕໍ່ຖານະດ້ານການເງິນຂອງ ຫົວໜ່ວຍທຸລະກິດໃດໜຶ່ງ.

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ